ກະຊວງວິທະຍາສາດແລະເຕັກໂນໂລຊີ
ຂາເຂົ້າ
ເລກທີ 0575 ກວຕ
ລົງວັນທີ 20 MAR 2014
ເວລາ 1106
ສົ່ງເຖິງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 93 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 17.3.2014

# ດຳລັດ

## ວ່າດ້ວຍການແຕ່ງຕັ້ງຄະນະ "ປະຕິບັດງານພິເສດຂອງລັດຖະບານ" ຊີ້ນຳວຽກງານຊອກຫາ, ຂຸດຄົ້ນ ແລະ ເຄື່ອນຍ້າຍອັດຖິທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມ ທີ່ເສຍສະຫຼະຊີວິດຢູ່ລາວ ໃນປາງສົງຄາມ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບລົງວັນທີ 6 ພຶດສະພາ 2003.
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ການຕົກລົງເອກະພາບກັນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ທີ່ໄດ້ເຊັນກັນໃນວັນທີ 07/04/1994.
- ອີງຕາມ ໜັງສືສະເໜີ ຂອງກະຊວງປ້ອງກັນປະເທດ ສະບັບເລກທີ 323/ກປທ,ລົງວັນທີ 07/02/2014.

## ນາຍົກລັດຖະມົນຕີ ຕົກລົງ:

ມາດຕາ 1: ແຕ່ງຕັ້ງຄະນະ "ປະຕິບັດງານພິເສດຂອງລັດຖະບານ" ຊີ້ນຳວຽກງານຊອກຫາ, ຂຸດຄົ້ນ ແລະ ເຄື່ອນຍ້າຍອັດຖິທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມ ທີ່ເສຍສະຫຼະຊີວິດຢູ່ລາວ ໃນປາງສົງຄາມ, ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ພົ.ຕ ຈັນສະໝອນ ຈັນຍາລາດ, ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ ເປັນປະທານ;
2. ທ່ານ ບຸນຄົງ ຫຼ້າສຸກັນ, ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ, ທັງເປັນຜູ້ປະຈຳການ;
3. ທ່ານ ພົ.ວ ວິໄລ ຫຼ້າຄຳຟອງ, ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ, ກະຊວງປ້ອງກັນປະເທດ ເປັນຮອງປະທານ;
4. ທ່ານ ຂັນທອງ ມະໂນທຳ, ຫົວໜ້າຫ້ອງການກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
5. ທ່ານ ບົວພັນ ວົງສາຈັນທອງ, ຮອງຫົວໜ້າກົມກົງສຸນ, ກະຊວງການຕ່າງປະເທດ ເປັນກຳມະການ;

6. ທ່ານ ສິງຫາ ສິງສະຫວັນ, ຮອງຫົວໜ້າຫ້ອງການ ຄະນະກຳມາທິການຮ່ວມມື ລາວ-ຫວຽດນາມ, ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;

**ມາດຕາ 2:** ສິດ ແລະ ໜ້າທີ່ ຂອງຄະນະ "ປະຕິບັດງານພິເສດຂອງລັດຖະບານ" ຊີ້ນຳວຽກງານຊອກຫາ, ຂຸດຄົ້ນ ແລະ ເຄື່ອນຍ້າຍອັດຖິທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມ ທີ່ເສຍສະຫຼະຊີວິດຢູ່ລາວ ໃນປາງສົງຄາມ ມີດັ່ງນີ້:

1. ຊີ້ນຳວຽກງານຊອກຫາ, ຂຸດຄົ້ນ ແລະ ເຄື່ອນຍ້າຍອັດຖິທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມທີ່ເສຍສະຫຼະຊີວິດຢູ່ລາວ ໃນປາງສົງຄາມ;
2. ມີສິດແຕ່ງຕັ້ງພະນັກງານຊ່ວຍວຽກຂອງຕົນຈຳນວນໜຶ່ງ ເຊິ່ງປະກອບດ້ວຍພະນັກງານຈາກຂະແໜງການ ແລະ ພາກສ່ວນກ່ຽວຂ້ອງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ;
3. ມີໜ້າທີ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນຕ່າງໆໃນທົ່ວປະເທດ, ຮ່ວມກັບຄະນະປະຕິບັດງານພິເສດຝ່າຍຫວຽດນາມ ເພື່ອປະຕິບັດວຽກງານຊອກຫາ, ຂຸດຄົ້ນ ແລະ ເຄື່ອນຍ້າຍອັດຖິທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມ ທີ່ເສຍສະຫຼະຊີວິດຢູ່ລາວ ໃນປາງສົງຄາມ ຕາມການຕົກລົງຂອງລັດຖະບານ;
4. ຂື້ນແຜນງົບປະມານປະຈຳປີ ເພື່ອຮັບໃຊ້ວຽກງານດັ່ງກ່າວ ຕາມສະພາບ ແລະ ເງື່ອນໄຂຄວາມເປັນຈິງ.
5. ປະຕິບັດບັນດາໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 3:** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫລວງ, ພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4:** ດຳລັດສະບັບນີ້ ປ່ຽນແທນດຳລັດສະບັບເລກທີ 191/ນຍ, ລົງວັນທີ 24/12/2003 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ